

ຄູ່ມື ສຳລັບ ການຈັດຕັ້ງປະຕິບັດຕົວຈິງ / ໂຄງການສ້າງຄວາມເຂັ້ມແຂງໃນການຜະລິດໃບຊາເປັນສິນຄ້າ / ເດືອນ ເມສາ

# ການສົ່ງອອກຊາອິນຊີລາວໄປເອີລົບ

## ຄູ່ມືສຳລັບຜູ້ຈັດຕັ້ງປະຕິບັດຕົວຈິງໃນການພັດທະນາ ແລະ ການຈັດຕັ້ງຊາວກະສິກອນຢູ່ ສປປ ລາວ

ຄູ່ມືສະບັບນີ້ສ້າງຂຶ້ນພາຍໃຕ້ໂຄງການສົ່ງເສີມການຜະລິດໃບຊາເປັນສິນຄ້າທີ່ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ເປັນຜູ້ຈັດຕັ້ງປະຕິບັດ ແລະ ໄດ້ຮັບການຊ່ວຍເຫຼືອຈາກອົງການພັດທະນາແຫ່ງ ປະເທດຝຣັ່ງ (AFD). ສຳລັບຄຳເຫັນໃນຄູ່ມືສະບັບນີ້ເປັນຂອງຜູ້ຂຽນ ແລະ ບໍ່ມີສ່ວນກ່ຽວຂ້ອງກັບອົງການພັດທະນາແຫ່ງ ປະເທດຝຣັ່ງ (AFD).

### ແນະນຳຂັ້ນຕອນທັງໝົດ ກ່ຽວກັບ ການສົ່ງອອກຊາອິນຊີໃຫ້ແກ່ອົງການຈັດຕັ້ງຂອງຊາວກະສິກອນ

ຄູ່ມືສະບັບນີ້ ໃຫ້ຄຳແນະນຳແກ່ກຸ່ມຊາວກະສິກອນ ຫຼື ສະຫະກອນ ທີ່ມີຄວາມພະຍາຍາມສົ່ງອອກຊາອິນຊີ ຫຼື ຊາທົ່ວໄປ ໄປຍັງ ເອີລົບ. ຄວາມຈິງແລ້ວ ຂັ້ນຕອນການສົ່ງອອກ ຍັງມີຄວາມຫຍຸ້ງຍາກ ແລະ ບໍ່ທັນຈະແຈ້ງ ໃຫ້ແກ່ຊາວກະສິກອນ ເນື່ອງຈາກ ຍັງຂາດເຄື່ອງອຸປະກອນການສື່ສານ ແລະ ແລກປ່ຽນຄວາມຮູ້ ເພື່ອເປັນທິດທາງໃຫ້ແກ່ຊາວກະສິກອນ ເຂົ້າໃຈບັນດາຂັ້ນຕອນສຳຄັນໃນການສົ່ງອອກ. ສະນັ້ນ, ຄູ່ມືສະບັບນີ້ ຈຶ່ງນຳສະເໜີບັນດາຂັ້ນຕອນສຳຄັນຂອງການສົ່ງອອກຊາ ໄປ ເອີລົບ ໂດຍສະເພາະ ແມ່ນການສົ່ງອອກຊາອິນຊີ ຕາມເງື່ອນໄຂສົ່ງອອກແບບ FOB (ຫຼື ຕາມເງື່ອນໄຂສົ່ງອອກແບບຜູ້ຂາຍບໍ່ໄດ້ຮັບຜິດຊອບຄ່າຂົນສົ່ງ).

ທ່ານຜູ້ອ່ານ ຈະຮັບຮູ້ ແລະ ເຂົ້າໃຈ 12 ຂັ້ນຕອນ ຂອງຂະບວນການສົ່ງອອກ. ເຖິງແນວໃດກໍ່ຕາມ ບັນດາຂັ້ນຕອນດັ່ງກ່າວ ໄດ້ສ້າງ ແລະ ພັດທະນາຂຶ້ນ ຕາມຄວາມຕ້ອງການຂອງຜູ້ຊື້ ແລະ ຄວາມພິເສດສະເພາະຂອງສິນຄ້າສົ່ງອອກ (ເຊັ່ນ: ຊາຫຸ້ມຫໍ່ສຳເລັດຮູບ, ການຂາຍສົ່ງ, ຊາໃບ, ). ຄູ່ມືສະບັບນີ້ ສ້າງຂຶ້ນຕາມລະບຽບການທີ່ນຳໃຊ້ ໃນປີ 2023. ສະນັ້ນ, ຄູ່ມືສະບັບນີ້ ອາດຈະແຕກຕ່າງ ເມື່ອທຽບໃສ່ລະບຽບການເນື່ອງຈາກ ລະບຽບການ ແລະ ນິຕິກຳ ມີການປັບປຸງເປັນແຕ່ລະໄລຍະ ຢູ່ ສປປ ລາວ ແລະ ເອີລົບ. ສິ່ງສຳຄັນ ຄູ່ມືສະບັບນີ້ ແນໃສ່ຈັດການ ການສົ່ງອອກ ຕາມຂະບວນການເງື່ອນໄຂສົ່ງອອກແບບ FOB ຢູ່ຊາຍແດນ ຂອງ ສປປ ລາວ.

ຄູ່ມືສະບັບນີ້ ຂຽນຂຶ້ນຕາມບົດຮຽນຕົວຈິງ ຂອງ ໂຄງການສ້າງຄວາມເຂັ້ມແຂງ ໃນການຜະລິດໃບຊາເປັນສິນຄ້າ (Mekong Tea Project) ທີ່ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຈັດຕັ້ງປະຕິບັດໂດຍໄດ້ຮັບການຊ່ວຍເຫຼືອດ້ານວິຊາການ ຈາກ ອົງການ GRET, AVSF ແລະ LCG, ແລະ ໄດ້ຮັບທຶນຊ່ວຍເຫຼືອ ຈາກ ອົງການຝຣັ່ງເພື່ອການພັດທະນາ (AFD).

ໂຄງການສ້າງຄວາມເຂັ້ມແຂງໃນການຜະລິດໃບຊາເປັນສິນຄ້າໄດ້ສະໜັບສະໜູນການສ້າງໂຄງຮ່າງການຈັດຕັ້ງ ແລະ ພັດທະນາ ສະຫະກອນຜູ້ຜະລິດຊາເມືອງເມິງ ແຂວງ ບໍ່ແກ້ວ, ສປປ ລາວ.

ຫຼັງຈາກສະຫະກອນດັ່ງກ່າວ ໄດ້ຮັບການຢັ້ງຢືນຊາອິນຊີ ແລະ ການຄ້າເປັນທຳ ກໍ່ໄດ້ມີສັນຍາຂາຍຊາກັບບໍລິສັດຊື້ຊາລາຍໃຫຍ່ ຢູ່ ປະເທດ ຝຣັ່ງ ແລະ ໄດ້ສົ່ງອອກຊາຂຽວອິນຊີ ຄັ້ງທຳອິດ ໃນເດືອນ ທັນວາ ປີ 2023.

ການສັງລວມໂດຍສັງເຂບນີ້ ໄດ້ສະຫຼູບຂັ້ນຕອນການສົ່ງອອກ ທີ່ໄດ້ມາຈາກການຈັດຕັ້ງປະຕິບັດການສົ່ງອອກຕົວຈິງ ແລະ ເພື່ອແລກປ່ຽນຄວາມຮູ້ຮ່ວມກັບຜູ້ທີ່ມີທ່າແຮງທີ່ຈະສົ່ງອອກຊາລາຍອື່ນ ໂດຍບົດຮຽນຕົວຈິງດັ່ງກ່າວ ໄດ້ຈາກໂຄງການສ້າງຄວາມເຂັ້ມແຂງ ໃນການຜະລິດໃບຊາເປັນສິນຄ້າ ເພື່ອເຮັດໃຫ້ຜູ້ສຜົ່ງອອກ ສາມາດເຂົ້າເຖິງຕະຫຼາດ ເອີລົບ. ຄູ່ມືສະບັບນີ້ ນຳສະເໜີບົດຮຽນຕົວຈິງ ກ່ຽວກັບ ການເປັນຫຸ້ນສວນການຄ້າ-ຂາຍຊາ ຂອງ ສະຫະກອນຜູ້ຜະລິດຊາເມືອງເມິງ ໃນປັດຈຸບັນ ແລະ ບົດຮຽນດັ່ງກ່າວ ສາມາດນຳໄປໝູນໃຊ້ກັບຄູ່ຮ່ວມທຸລະກິດການຄ້າອື່ນໄດ້.

## 12 ຂັ້ນຕອນສຳລັບການຈັດການສົ່ງອອກຊາອິນຊີ ໄປ ເອີລົບ

ການສົ່ງອອກຊາອິນຊີ ໄປ ເອີລົບ ໄດ້ແບ່ງອອກເປັນ 12 ຂັ້ນຕອນ ຈາກບົດຮຽນການຈັດຕັ້ງປະຕິບັດຕົວຈິງ. ເຖິງແນວໃດກໍ່ຕາມ ບັນດາຂັ້ນຕອນດັ່ງກ່າວ ອາດຈະແຕກຕ່າງກັນ ໂດຍຂຶ້ນກັບເງື່ອນໄຂ ຂອງ ຜູ້ຊື້ ແລະລະບຽບການ ຂອງ ສປປ ລາວ ແລະ ເອີລົບ ທີ່ປະກາດໃຊ້ເປັນແຕ່ລະໄລຍະ. ນອກຈາກນັ້ນ ບັນດາຂັ້ນຕອນເລົ່ານີ້ ຍັງອາດຈະປ່ຽນແປງໄປຕາມປະເພດຊາທີ່ສົ່ງອອກ. ຄູ່ມືສະບັບນີ້ ເນັ້ນໃສ່ການຂາຍສົ່ງຊາໃບ. ບັນດາຂັ້ນຕອນເລົ່ານີ້ ເລີ່ມແຕ່ຂັ້ນຕອນການເຈລະຈາສັນຍາກັບຜູ້ຊື້ ຈົນເຖິງຂັ້ນຕອນຜູ້ຊື້ໄດ້ຮັບຊຸດສິນຄ້າ ຢູ່ ເອີລົບ. ບັນດາຂັ້ນຕອນດັ່ງກ່າວ ສ້າງຂຶ້ນມາສະເພາະການສົ່ງອອກຕາມເງື່ອນໄຂການສົ່ງອອກແບບ FOB ຢູ່ ຊາຍແດນ ຂອງສປປ ລາວ - ໝາຍຄວາມວ່າ ຫຼັງຈາກຂ່ຽນຖ່າຍສິນຄ້າຊາໃສ່ຕູ້ຂົນສົ່ງ ຢູ່ຊາຍແດນ ຂອງ ສປປ ລາວ ແລ້ວ ແມ່ນ ຜູ້ຊື້ ເປັນເຈົ້າຂອງສິນຄ້າຊາໂດຍກົງ ພ້ອມທັງ ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນກັບສິນຄ້າ ໃນຊ່ວງການຂົນສົ່ງ ໄປເຖິງ ເອີລົບ.

### ຂັ້ນຕອນ 1: ການເຈລະຈາກັບຜູ້ຊື້ ກ່ຽວກັບ ເງື່ອນໄຂການສົ່ງອອກແບບ FOB ຫຼື CIF?

#### > ການເຫັນດີຕົກລົງ ກ່ຽວກັບ ປະລິມານ ແລະ ລາຄາ

ກ່ອນເລີ່ມຕົ້ນຂະບວນການສົ່ງອອກຊາອິນຊີ ໄປ ເອີລົບ, ຜູ້ຊື້ ແລະຜູ້ຂາຍ ຕ້ອງເຫັນດີຕົກລົງ ກ່ຽວກັບ ປະເພດຊາ ທີ່ຊື້ນຳກັນ (ຊາຂຽວ, ຊາຂາວ,...), ຮູບແບບສິນຄ້າຊາ (ຊາໃບ, ຊາບົດ,...), ປະລິມານ, ລາຄາ ແລະ ແຜນການສົ່ງອອກ ໂດຍກຳນົດໄວ້ລະອຽດໃນສັນຍາຊື້-ຂາຍ ຫຼື ໃບສັ່ງຊື້. ການກຳນົດເນື້ອໃນລະອຽດໃນສັນຍາ ຊ່ວຍໃຫ້ມີແນວທາງຈະແຈ້ງໃນການສົ່ງອອກ. ເຖິງແນວໃດກໍ່ຕາມ ສຳລັບ ປະລິມານຂາຍ ອາດຈະມີການປ່ຽນແປງ ຕາມຜົນການວິໄຈຫາສານເຄມີໃນຊາ ຫຼືຂະບວນການປຸງແຕ່ງຊາ ແລະ ປະລິມານຊື້ຕົວຈິງ ທີ່ກຳນົດໄວ້ໃນໃບແຈ້ງລາຄາ.

#### > ການເຫັນດີຕົກລົງ ກ່ຽວກັບ ເງື່ອນໄຂການສົ່ງອອກແບບ: FOB ຫຼື CIF?

ສິ່ງທີ່ສຳຄັນ ແມ່ນ ຜູ້ຊື້ ແລະ ຜູ້ຂາຍ ຕ້ອງເຫັນດີຕົກລົງ ກ່ຽວກັບ ເງື່ອນໄຂການສົ່ງອອກ: ເງື່ອນໄຂການສົ່ງອອກແມ່ນແບບ FOB ຫຼື CIF ບໍ ? ເຊິ່ງທັງສອງເງື່ອນໄຂດັ່ງກ່າວ ມີຄວາມສຳຄັນ ເນື່ອງຈາກ ກຳນົດໃຫ້ຜູ້ຂາຍຫຼື ຜູ້ຊື້ ຮັບຜິດຊອບຄ່າຂົນສົ່ງ ຫຼື ປະກັນໄພສິນຄ້າຊາ ໃນຊ່ວງການຂົນສົ່ງ ໄປເຖິງ ເອີລົບ.

FOB ໝາຍເຖິງ ເງື່ອນໄຂການສົ່ງອອກທີ່ຜູ້ຂາຍບໍ່ຮັບຜິດຊອບຄ່າຂົນສົ່ງ - free on board ແລະ ເປັນຄຳສັບ ທີ່ນິຍົມໃຊ້ກັນຫຼາຍ, ເປັນເງື່ອນໄຂການຂົນສົ່ງສິນຄ້າສາກົນ ແລະ ເປັນຄຳສັບທີ່ນຳໃຊ້ສຳລັບການຂົນສົ່ງ ເພື່ອສະແດງໃຫ້ຮູ້ວ່າ ລາຄາຂາຍ ບໍ່ໄດ້ລວມຄ່າຈັດສົ່ງສິນຄ້າໄປເຖິງ ເອີລົບ ໂດຍຜູ້ຊື້ ຕ້ອງໄດ້ຮັບຜິດຊອບຄ່າຈັດສົ່ງສິນຄ້າ ຈາກຈຸດໃດໜຶ່ງທີ່ແນ່ນອນ ໃນຕ່ອງໂສ້ການສະໜອງ.

ໃນໄລຍະສິນຄ້າ ຍັງຢູ່ ສປປ ລາວ ນັ້ນ ເງື່ອນໄຂການສົ່ງອອກແບບ FOB ໝາຍເຖິງ ສະຫະກອນ ຮັບຜິດຊອບການສົ່ງອອກທັງໝົດ ຈົນເຖິງຂັ້ນຕອນຂົນສິນຄ້າ ຢູ່ ຊາຍແດນ ຂອງ ສປປ ລາວ (ຕົວຢ່າງ: ຈາກແຂວງ ບໍ່ແກ້ວ ຫາ ທ່າບົກ (Dry Port) ນະຄອນຫຼວງວຽງຈັນ ຢູ່ ທ່ານາແລ້ງ). ອັນນີ້ ເອີ້ນວ່າ FOB ນະຄອນຫຼວງວຽງຈັນ . ຫຼັງຈາກສິນ

### ອະທິບາຍຄຳສັບ

> ໃບຂົນສົ່ງສິນຄ້າ (Bill of Lading, BL ຫຼື B/L) ເປັນເອກະສານທີ່ຖືກຕ້ອງຕາມລະບຽບການ ທີ່ບໍລິສັດຂົນສົ່ງ ອອກໃຫ້ແກ່ຜູ້ຂົນສົ່ງສິນຄ້າ ໂດຍກຳນົດ ປະເພດ, ປະລິມານ ແລະ ປາຍທາງ ຂອງສິນຄ້າ.

> ຜູ້ຊື້ ໝາຍເຖິງ ຜູ້ຊື້ຊາ/ສິນຄ້າຊາ.

> CIF: ໝາຍເຖິງ ຄ່າໃຊ້ຈ່າຍ, ປະກັນໄພ ແລະ ຂົນສົ່ງ (CIF) ເປັນເງື່ອນໄຂການຂົນສົ່ງສິນຄ້າທີ່ນຳໃຊ້ ເມື່ອຂົນສົ່ງສິນຄ້າທາງນ້ຳ. ສຳລັບ ການຂົນສົ່ງຕາມເງື່ອນໄຂແບບ CIF ແມ່ນ ຜູ້ຂາຍຮັບຜິດຊອບຄ່າໃຊ້ຈ່າຍ, ປະກັນໄພ ແລະ ຂົນສົ່ງສິນຄ້າ ຂອງຜູ້ຊື້ ໃນຊ່ວງການຂົນສົ່ງຜ່ານ.

> CO: ໃບຢັ້ງຢືນແຫຼ່ງກຳເນີດ (Certificate of Origin) ເປັນໃບທີ່ສະແດງເຖິງແຫຼ່ງຜະລິດຂອງສິນຄ້າ. ໃບຢັ້ງຢືນດັ່ງກ່າວ ມີຂໍ້ມູນ ກ່ຽວກັບສິນຄ້າ, ປາຍທາງຂອງສິນຄ້າ ແລະ ປະເທດສົ່ງອອກສິນຄ້າ.

> COI: ໃບຢັ້ງຢືນການກວດກາ (Certificate of Inspection - COI) ນຳໃຊ້ ເມື່ອນຳເຂົ້າສິນຄ້າ ໄປ ເອີລົບ ທີ່ຜະລິດຕາມມາດຕະຖານກະສິກຳອິນຊີ ເພື່ອຢັ້ງຢືນຄວາມໂປ່ງໃສ ແລະສາມາດກວດສອບໄດ້ ສຳລັບສິນຄ້າອິນຊີນັ້ນ ແລະ ຫຼຸດຜ່ອນການແອບອ້າງ/ປອມແປງສິນຄ້າ. ໃບຢັ້ງຢືນການກວດກາດັ່ງກ່າວ ແມ່ນສະຫະພາບເອີລົບ ອອກໃຫ້ ໂດຍຜ່ານລະບົບTRACES (TRAde Control and Expert System).

> ເຈົ້າຂອງຊຸດສິນຄ້າ: ໝາຍກເຖິງ ບຸກຄົນ ຫຼືບໍລິສັດ ທີ່ສິນຄ້າສົ່ງໄປໃຫ້.

> ຜູ້ສົ່ງອອກ: ໝາຍເຖິງ ບໍລິສັດ ທີ່ເປັນເຈົ້າໃບອະນຸຍາດດຳເນີນທຸລະກິດການສົ່ງອອກສິນຄ້າ.

> FOB (Free on Board): ໝາຍເຖິງເງື່ອນໄຂການສົ່ງອອກທີ່ກຳນົດຈຸດຄວາມເປັນເຈົ້າຂອງສິນຄ້າ ຈາກ ຜູ້ຂາຍ ໄປໃຫ້ຜູ້ຊື້ ແລະ ຈາກຈຸດໃດເປັນຕົ້ນໄປ ທີ່ຜູ້ຊື້ ຮັບຜິດຊອບທັງໝົດຕໍ່ສິນຄ້າ ເຊັ່ນ: ຄວາມເສຍຫາຍຂອງສິນຄ້າໃນໄລຍະການຂົນສົ່ງ. "FOB" ໝາຍເຖິງຜູ້ຊື້ ຮັບຜິດຊອບທັງໝົດຕໍ່ຄ່າໃຊ້ຈ່າຍ ແລະຄວາມສ່ຽງ ພາຍຫຼັງທີ່ຜູ້ຂາຍ ໄດ້ຂົນສົ່ງສິນຄ້າອອກຈາກຈຸດແຫຼ່ງຜະລິດສິນຄ້າ.

> ສະຫຼາກ (Label): ໝາຍເຖິງ ສະຫຼາກສຳລັບການສົ່ງອອກ ຫຼື ເອີ້ນວ່າ ເຄື່ອງໝາຍການສົ່ງອອກ ຫຼື ເຄື່ອງໝາຍການຂົນສົ່ງ ທີ່ໃຊ້ສຳລັບສິນຄ້າ ຫຼື ການຫຸ້ມຫໍ່ສິນຄ້າ ເພື່ອສະແດງໃຫ້ຮູ້ວ່າ ສິນຄ້າດັ່ງກ່າວ ແມ່ນເພື່ອການສົ່ງອອກ. ສະຫຼາກສົ່ງອອກ ນຳໃຊ້ຫຼາຍເປົ້າໝາຍ ເຊັ່ນ: ເພື່ອການຈຳແນກ, ຈົດບັນທຶກ ແລະ ເພື່ອໃຫ້ສອດຄ່ອງຕາມລະບຽບການ.

> ໃບຢັ້ງຢືນສຸຂານາໄມພືດ (Phyto): ໃບຢັ້ງຢືນສຸຂານາໄມພືດ ສະແດງໃຫ້ຮູ້ວ່າສິນຄ້າກະສິກຳດັ່ງກ່າວ ໄດ້ຜ່ານການກວດກາ ແລະ ປອດສັດຕູພືດ. ອົງການປ້ອງກັນພືດແຫ່ງຊາດ ຂອງປະເທດສົ່ງອອກ ຮັບຜິດຊອບອອກໃບຢັ້ງຢືນດັ່ງກ່າວ.

> ຄົນຂາຍ (Seller) ໝາຍເຖິງ ຄົນຂາຍຊາ / ຜູ້ສົ່ງອອກຊາ.

> ຜູ້ຈັດສົ່ງສິນຄ້າ (Shipper): ໝາຍເຖິງ ບໍລິສັດທີ່ເປັນເຈົ້າຂອງສິນຄ້າທີ່ຂົນສົ່ງ ແລະ/ຫຼື ບໍລິສັດຮັບຜິດຊອບຈັດສົ່ງສິນຄ້າ.

ຄ່າຂົ່ງນຖ່າຍຂຶ້ນຕູ້ຄອນເທັນເນີ້ແລ້ວ ຜູ້ຊື້ ຈຶ່ງຮັບຜິດຊອບທັງໝົດຕໍ່ການຂົນສົ່ງ ແລະ ການປະກັນໄພ. ດັ່ງນັ້ນ, ຈຸດປ່ຽນຄວາມຮັບຜິດຊອບໃນເງື່ອນໄຂການສົ່ງອອກແບບ FOB ຕ້ອງກຳນົດຢ່າງຈະແຈ້ງ ໃນເອກະສານ (ເຊັ່ນ: ສັນຍາ, ໃບສັ່ງຊື້ ຫຼື ຂໍ້ຕົກລົງ).

CIF ໝາຍເຖິງ ຜູ້ຂາຍ ຮັບຜິດຊອບທັງໝົດຕໍ່ການຂົນສົ່ງ ແລະ ການປະກັນໄພສິນຄ້າ ຜູ້ຂາຍຮັບຜິດຊອບຄວາມເສຍຫາຍທີ່ອາດຈະເກີດຂຶ້ນຕໍ່ກັບສິນຄ້າໃນທຸກກໍລະນີໃຫ້ກັບຜູ້ຊື້. ໃນກໍລະນີການສົ່ງອອກສິນຄ້າຊາໄປ ເອີລົບ ໝາຍຄວາມວ່າ ສະຫະກອນ ຮັບຜິດຊອບທັງໝົດຕໍ່ການຂົນສົ່ງ ແລະ ການປະກັນໄພ ສິນຄ້າ ຈົນເຖິງດ່ານຂາເຂົ້າ ຢູ່ ເອີລົບ.

ໂດຍທົ່ວໄປແລ້ວ ບໍລິສັດ ຫຼື ອົງການຈັດຕັ້ງຂອງຊາວກະສິກອນ ຄວນເຈລະຈາລາຄາໃນເງື່ອນໄຂການສົ່ງອອກແບບ FOB ຢູ່ ຊາຍແດນຂອງ ສປປ ລາວ ເນື່ອງຈາກ ຖ້າການສົ່ງອອກຕາມເງື່ອນໄຂແບບ CIF ນັ້ນ, ຜູ້ສົ່ງອອກ ຕ້ອງມີຄວາມຮູ້ໃນການບໍລິຫານຈັດການສົ່ງອອກ ແລະ ຄວາມສ່ຽງ. ດັ່ງນັ້ນ, ຄູ່ມືສະບັບນີ້ ເນັ້ນໃສ່ການສົ່ງອອກສິນຄ້າຊາ ຕາມເງື່ອນໄຂການສົ່ງອອກແບບ FOB ໂດຍບໍລິສັດ ຫຼື ອົງການຈັດຕັ້ງຂອງຊາວກະສິກອນສ່ວນໃຫຍ່ ນຳໃຊ້ເປັນສ່ວນຫຼາຍ.

## ຂັ້ນຕອນ 2: ການວິໄຈຫາສານເຄມີຕົກຄ້າງໃນຊາ

ເມື່ອເຫັນດີຕົກລົງດ້ານປະລິມານ ແລະ ຜົນຜະລິດແລ້ວ, ຜູ້ຂາຍ ຕ້ອງປະຕິບັດຕາມຂະບວນການວິໄຈຫາລະດັບສານເຄມີຕົກຄ້າງໃນຜົນຜະລິດຊາ ທີ່ຈະສົ່ງອອກ ເພື່ອກວດກາການຕົກຄ້າງຂອງສານເຄມີໃນຜົນຜະລິດໃຫ້ສອດຄ່ອງກັບຄ່າມາດຕະຖານການຕົກຄ້າງ ຂອງ ເຄມີ ຂອງ ເອີລົບ.

ຄວາມຈິງແລ້ວ ຜົນການວິໄຈສານເຄມີຕົກຄ້າງໃນຊາ ທີ່ສົ່ງອອກໄປຕະຫຼາດ ອີຢູ ຕ້ອງຕໍ່າກວ່າລະດັບຄ່າມາດຕະຖານການຕົກຄ້າງສູງສຸດຂອງສານເຄມີ ຂອງ ອີຢູ (EU MRLs). ສຳລັບ ລະດັບຄ່າມາດຕະຖານການຕົກຄ້າງສູງສຸດຂອງສານເຄມີ ຂອງສິນຄ້ານຳເຂົ້າ ໄປ ອີຢູ ສາມາດເຂົ້າເບິ່ງໄດ້ໃນອິນເຕີເນັດ.

ນອກຈາກນັ້ນ, ໃນກໍລະນີເປັນສິນຄ້າຊາອິນຊີ, ສິນຄ້າຊາດັ່ງກ່າວ ຕ້ອງສອດຄ່ອງກັບລະບຽບການສະເພາະ ຂອງ ຜູ້ຊື້ ກ່ຽວກັບ ການຜະລິດຕາມມາດຕະຖານກະສິກຳອິນຊີ. ຜູ້ຊື້ຊາອິນຊີທັງໝົດ ມີນະໂຍບາຍບໍ່ໃຫ້ມີສານເຄມີຕົກຄ້າງ ໂດຍສະເພາະ ແມ່ນ ສານກລາຍໂຟເສດ (Glyphosathe), ແຕ່ວ່າ ມີຜູ້ຊື້ອີກຈຳນວນໜຶ່ງ ອາດຈະຍອມຮັບໃຫ້ມີການຕົກຄ້າງຂອງສານເຄມີ ແຕ່ຕ້ອງຢູ່ໃນປະລິມານໜ້ອຍ ແລະ ເປັນສານເຄມີທີ່ໄດ້ຮັບການຍົກເວັ້ນເທົ່ານັ້ນ. ດັ່ງນັ້ນ, ຕ້ອງໄດ້ຊີ້ແຈງລະອຽດກັບຜູ້ຊື້ສິນຄ້າອິນຊີ.

### > ການກະກຽມຕົວຢ່າງ ຫຼື ການວິໄຈຫາສານເຄມີ

ຕົວຢ່າງເພື່ອວິໄຈໃນຫ້ອງທົດລອງ ຕ້ອງເກັບຕົວຢ່າງຈາກໝົດຊຸດສິນຄ້າສຸດທ້າຍ. ຊຸດສິນຄ້າດັ່ງກ່າວ ສາມາດແຍກອອກເປັນແຕ່ລະຊ່ອງໃນຂະບວນການຜະລິດ ໂດຍຂຶ້ນກັບລະບົບການຄວບຄຸມພາຍໃນ (ICS) (1) ແຍກຕາມມື້ເກັບກ່ຽວ, (2) ແຍກຕາມມື້ປຸງແຕ່ງ, (3) ແຍກຕາມບ້ານ ຫຼື (4) ແຍກຕາມສວນ. ຊຸດສິນຄ້າທັງໝົດ ຕ້ອງວິໄຈ. ຖ້າຊຸດສິນຄ້າໜຶ່ງ ມີຫຼາຍຖົງ, ຕ້ອງເກັບຕົວຢ່າງມາວິໄຈໝົດທຸກຖົງ. ໃນການວິໄຈ ຖ້າພົບເຫັນສານເຄມີຕົກຄ້າງໃນຕົວຢ່າງ ໃຫ້ແຍກຊຸດສິນຄ້າດັ່ງກ່າວນັ້ນອອກຕ່າງຫາກ ແລະ ສາມາດເກັບຕົວຢ່າງນຳວິໄຈຄືນອີກ. ດັ່ງນັ້ນ, ຊຸດສິນຄ້າສຸດທ້າຍທີ່ປົນກັນຢູ່ນັ້ນ ຈະບໍ່ປົນເປື້ອນນຳກັນ. ສຳລັບ ການໃສ່ເລກລະຫັດ ແລະ ການແຍກຊຸດຕົວຢ່າງ ແມ່ນຂຶ້ນກັບລະບົບການຄວບຄຸມພາຍໃນຂອງບໍລິສັດ.

ຕົວຢ່າງດັ່ງກ່າວ ຕ້ອງສະອາດ ແລະ ຢູ່ໃນສະພາບແວດລ້ອມທີ່ແຫ້ງ. ພະນັກງານທີ່ຮັບຜິດຊອບກະກຽມຕົວຢ່າງ ຕ້ອງນຸ່ງເຄື່ອງສະອາດ, ປ້ອງກັນບໍ່ໃຫ້ຜົມລົ່ນໃສ່, ໃສ່ໜ້າກາກອະນາໄມ ແລະ ລ້າງມືດ້ວຍສະບູທີ່ບໍ່ມີກິ່ນ ຫຼື ສານພິດ ແລ້ວລ້າງອອກດ້ວຍນ້ຳສະອາດ ກ່ອນໄປເກັບເອົາຕົວຢ່າງ ຫຼື ໃສ່ຖົງມືຢາງແບບປຸງແຕ່ງອາຫານ. ສະຖານທີ່ເກັບເອົາຕົວຢ່າງ ຕ້ອງບໍ່ມີຄົນ ຫຼື ສັດລົບກວນ, ບໍ່ໃຫ້ເຄື່ອງນຸ່ງມີນ້ຳຫອມ, ຄຣີມທາ ຫຼື ຄຣີມປ້ອງກັນແມງໄມ້ ເນື່ອງຈາກ ເຖິງແມ່ນວ່າ ສິ່ງເລົ່ານີ້ ມີໃນປະລິມານໜ້ອຍກໍ່ຕາມ ແຕ່ອາດສະມາດປົນເປື້ອນກັບຕົວຢ່າງໄດ້. ຖົງບັນຈຸຕົວຢ່າງ ຕ້ອງເປັນວັດສະດຸທີ່ປາສະຈາກສານພິດໃຊ້ສຳລັບບັນຈຸອາຫານ, ຕ້ອງເປີດ ແລະ ປິດຖົງຕົວຢ່າງທັນທີ ກ່ອນ ແລະ ຫຼັງການບັນຈຸຕົວຢ່າງແຕ່ລະອັນ. ບໍ່ໃຫ້ໃຊ້ປາກເຟີດມາກເກີ້ແບບຖາວອນ ຂຽນໃສ່ຖົງຕົວຢ່າງໂດຍກົງ ເພື່ອໝາຍ

## ການກະກຽມຫຸ້ມຫໍ່ຊາ



## ຕົວຢ່າງ 3 ປະເພດ

1. **ຕົວຢ່າງຂອງປະເພດຊາ:** ຕົວຢ່າງຂອງປະເພດຊາ ແມ່ນເພື່ອໃຫ້ຜູ້ຊື້ ຕັດສິນວ່າ ຕ້ອງການຊື້ຊາປະເພດໃດ (ກ່ອນຂະບວນການສົ່ງອອກ).
2. **ຕົວຢ່າງທາງຫ້ອງທົດລອງ:** ຕົວຢ່າງຂອງສິນຄ້າຊາທີ່ສົ່ງອອກ, ເກັບຕົວຢ່າງຈາກຊຸດສິນຄ້າຊາ ແລະ ຖົງບັນຈຸສິນຄ້າທັງໝົດ ກ່ອນນຳຊາໄປປຸງແຕ່ງ/ປະສົມ, ເພື່ອວິໄຈຫາການຕົກຄ້າງຂອງຢາປາບສັດຕູພືດໃນສິນຄ້າຊາ ໃນຫ້ອງທົດລອງ ຂອງຝ່າຍຜູ້ຊື້. ໃນບາງໂອກາດ ພາຍຫຼັງທີ່ສຳເລັດການປຸງແຕ່ງ/ປະສົມຊາແລ້ວ ໂດຍສະເພາະ ຖ້າຊາຄັດເລືອກເກຼດແລ້ວ, ໃຫ້ເກັບຕົວຢ່າງຄັ້ງທີສາມ:
3. **ຕົວຢ່າງການຂົນສົ່ງ:** ຕົວຢ່າງຂອງສິນຄ້າຊາທີ່ປຸງແຕ່ງ, ຄັດເລືອກເກຼດ ແລະ/ຫຼື ຈັດເປັນປະເພດດຽວກັນແລ້ວ ໂດຍເປັນສິນຄ້າຊາອັນດຽວກັນກັບທີ່ຜູ້ຊື້ຍອມຮັບ. ຂັ້ນຕອນການເກັບຕົວຢ່າງ ມີຄວາມແຕກຕ່າງກັນ ໂດຍອີງຕາມ ເງື່ອນໄຂຂອງຜູ້ຊື້ ແລະ ຕ້ອງໄດ້ປຶກສາຫາລືຮ່ວມກັນ ໃນຂັ້ນຕອນການເຈລະຈາການຂາຍ.

ຖົງຕົວຢ່າງ ແລະ ບໍ່ຄວນໃສ່ເຄື່ອງໝາຍ ຫຼື ເຈັ້ຍໝາຍ ລົງໃນຖົງຕົວຢ່າງ ເນື່ອງຈາກ ເຈັ້ຍ ແລະ ນ້ຳໝຶກ ອາດບັນຈຸສານເຄມີ.

### > ການສົ່ງຕົວຢ່າງໄປຫ້ອງທົດລອງ

ຕົວຢ່າງທີ່ສົ່ງໄປວິໄຈ ຕ້ອງມີປະລິມານພຽງພໍ ເພື່ອເປັນຕົວແທນໃຫ້ແກ່ຊຸດສິນຄ້ານັ້ນ. ຂະໜາດຂອງຕົວຢ່າງ ຂຶ້ນກັບຄວາມຕ້ອງການຂອງຫ້ອງທົດທອງ ໂດຍທົ່ວໄປແລ້ວ ຢ່າງໜ້ອຍ ແມ່ນ 1 ກລ. ຕົວຢ່າງມີຈຳນວນຫຼາຍເທົ່າໃດ ຜົນການວິໄຈຍິ່ງຊັດເຈັນເທົ່ານັ້ນ. ຕົວຢ່າງ ສາມາດສົ່ງໄປວິໄຈ ຢູ່ຫ້ອງທົດລອງໃດກໍ່ໄດ້ ຕາມມາດຕະຖານຂອງ ອີຢູ (ຢູ່ ເອີລົບ ຫຼື ປະເທດໄທ). ຜູ້ຊື້ ອາດມີຫ້ອງທົດລອງຂອງຕົນເອງ ແລະ ອາດຈະດຳເນີນການວິໄຈຫາສານເຄມີ ຢູ່ ຫ້ອງທົດລອງຂອງຕົນເອງເລີຍ.

ສິ່ງທີ່ຄວນເອົາໃຈໃສ່: ການສົ່ງຕົວຢ່າງຊາ ໄປ ເອີລົບ ໃຊ້ເວລາ 3 ວັນ ຫາ 2 ອາທິດ ໂດຍຂຶ້ນກັບບໍລິສັດຂົນສົ່ງທີ່ເລືອກ.ສຳລັບ ໄລຍະເວລາໃນການວິໄຈ ຍັງຂຶ້ນກັບທີ່ຕັ້ງຂອງຫ້ອງທົດລອງ. ນອກຈາກນັ້ນ ການສົ່ງຕົວຢ່າງຊາ ໄປ ເອີລົບ ແລະ ການວິໄຈ ມີມູນຄ່າສູງຫຼາຍ. ຂະບວນການວິໄຈກໍ່ໃຊ້ເວລາຫຼາຍ ໂດຍສະເພາະ ແມ່ນ ການຊອກຫາສານກາລາຍໂພເສດ (Glyphosate).

## ຂັ້ນຕອນ 3: ການຕິດສະຫຼາກ ການກະກຽມ ແລະ ການນຳໃຊ້ສະຫຼາກ/ສະຕິກເກີ້

ຂັ້ນຕອນທີ່ຈຳເປັນສຳລັບການສົ່ງອອກຊາອິນຊີ ຕ້ອງໄດ້ຮັບອະນຸຍາດໃຫ້ນຳໃຊ້ກາໝາຍອິນຊີ (ສະຫຼາກ) ຈາກໜ່ວຍງານຢັ້ງຢືນມາດຕະຖານກະສິກຳອິນຊີ ເພື່ອຕິດໃສ່ວັດສະດຸຫຸ້ມຫໍ່ສິນຄ້າຊາສົ່ງອອກ.

ໃນກໍລະນີ ການສົ່ງອອກສິນຄ້າຊາແບບບໍ່ຫຸ້ມຫໍ່, ໃຫ້ຕິດສະຫຼາກໄວ້ດ້ານລຸ່ມຖ້ານຮອງ. ໃນກໍລະນີ ການສົ່ງອອກສິນຄ້າຊາແບບຫຸ້ມຫໍ່ ໂດຍເປັນສິນຄ້າຫຸ້ມຫໍ່ເພື່ອຂາຍຍ່ອຍ, ສະຫຼາກທີ່ຕິດໃສ່ວັດສະດຸຫຸ້ມຫໍ່ນັ້ນຕ້ອງໄດ້ຮັບອະນຸຍາດໃຫ້ນຳໃຊ້.

ສະຕິກເກີ້ (ສະຫຼາກ) ແມ່ນສະຫະກອນ ສ້າງຂຶ້ນ ແລະ ສະເໜີຂໍອະນຸຍາດນຳໃຊ້ນຳໜ່ວຍງານຢັ້ງຢືນ.

## ຂັ້ນຕອນ 4: ການປຸງແຕ່ງ/ປະສົມຊາ (ສິນຄ້າຊາສຳລັບຂາຍ)

ເມື່ອໄດ້ຮັບຜົນວິໄຈການຕົກຄ້າງຂອງຢາປາບສັດຕູພືດແລ້ວ, ກໍ່ສາມາດຮູ້ຂໍ້ມູນປະລິມານສິນຄ້າຊາ ທີ່ສາມາດແຈ້ງໃຫ້ຜູ້ຊື້ໄດ້. ຊາທີ່ຜ່ານການວິໄຈນັ້ນ (ທີ່ສາມາດຂາຍໄປພ້ອມກັນ) ໄດ້ປຸງແຕ່ງ/ປະສົມເຂົ້າກັນ. ການປຸງແຕ່ງ/ປະສົມຊາ ໝາຍເຖິງ ການເອົາຊາທີ່ຜະລິດໃນແຕ່ລະຊຸດມາປຸງແຕ່ງ/ປະສົມເຂົ້າເປັນອັນດຽວ ຫຼື ເປັນຫຼາຍປະເພດຊາທີ່ມີຄຸນສະນະອັນດຽວກັນ.

ກ່ອນນຳເອົາຊາມາປຸງແຕ່ງ/ປະສົມກັນ ຕ້ອງກວດສອບຄຸນນະພາບຊາພ້ອມທັງ ຄັດເອົາຊາທີ່ບໍ່ໄດ້ຕາມເງື່ອນໄຂອອກ. ການຄັດເລືອກເອົາຊາອອກ ອາດຈະເຮັດໃຫ້ປະລິມານຊາຫຼຸດລົງ ແລະ ບໍ່ໄດ້ຕາມປະລິມານ

### ຂະບວນການວິໄຈຊາຂອງສະຫະກອນຜູ້ຜະລິດຊາເມືອງເມິງ

**ເກັບ 1 ຕົວຢ່າງຕໍ່ບ້ານ.**

ເກັບເອົາປະລິມານໜ້ອຍຈາກຊຸດສິນຄ້າທັງໝົດທີ່ຜະລິດໃນແຕ່ລະວັນ ຢູ່ບ້ານທີ່ເກັບຕົວຢ່າງ. ຫຼັງຈາກນັ້ນ ປະສົມຕົວຢ່າງທີ່ເກັບມາເຂົ້າກັນໃຫ້ເປັນອັນດຽວ ເພື່ອວິໄຈ.

↓

**ຜູ້ຊື້ຕົກລົງເຮັດການວິໄຈໃນຫ້ອງທົດລອງຂອງຕົນເອງ ໂດຍບໍ່ເສຍຄ່າໃຊ້ຈ່າຍ ເຊິ່ງຊ່ວຍຮັກສາຕົ້ນທຶນການ**

↓

**ຈັດສົ່ງຊາຕົວຢ່າງຈາກແຕ່ລະບ້ານເຖິງຜູ້ຊື້ ພາຍໃນ 7 ວັນ**

↓

**ຜູ້ຊື້ ແຈ້ງຜົນການວິໄຈ ພາຍໃນ 10 ວັນ ພາຍຫຼັງໄດ້ຮັບຊາຕົວຢ່າງ**

↓

**ຖ້າຕົວຢ່າງຊາຂອງບ້ານໜຶ່ງມີບັນຫາ ສາມາດວິໄຈຄືນຕື່ມອີກ ເພື່ອຊອກຫາຂໍ້ມູນລະອຽດສະເພາະ.**

ມີບັນຫາມາຈາກສວນຊາສະເພາະໃດໜຶ່ງບໍ່ ຫຼື ເກີດສະເພາະໃນຊ່ວງເວລາໃດໜຶ່ງຂອງປີນັ້ນ?

**ລາຍຈ່າຍຂອງຂະບວນການ:**
ສຳລັບການສົ່ງຕົວຢ່າງ ປະມານ 600 USD.
ໄລຍະເວລາຂອງຂະບວນການ: 12 ຫາ 17 ວັນ

**ຕົວຢ່າງສະຫຼາກຢູ່ກ່ອງສິນຄ້າຊາ (ການຫຸ້ມຫໍ່)ອາດມີຂໍ້ມູນສຳຄັນດັ່ງຕໍ່ໄປນີ້ (ລາຍການສິນຄ້າ ທີ່ຕ້ອງກວດສອບນຳອົງກອນຢັ້ງຢືນ):**

- ຊື່ຜະລິດຕະພັນສິນຄ້າ
- ເລກລະຫັດຊຸດສິນຄ້າ
- ຜູ້ສະໜອງ
- ປະເທດຜະລິດ
- ປະເທດນຳເຂົ້າ
- ອົງກອນຢັ້ງຢືນອິນຊີ
- ເລກລະຫັດອິນຊີ
- ນ້ຳໜັກລວມ ແລະ ນ້ຳໜັກສຸດທິ
- ວັນເດືອນປີສຳລັບການບໍລິໂພກ



ສະຫຼາກກ່ອງຊາສຳລັບສົ່ງອອກ ຂອງ ສະຫະກອນຜູ້ຜະລິດຊາເມືອງເມິງ (ຂາຍສົ່ງ)

ທີ່ຕ້ອງການຂາຍ.

ສິ່ງທີ່ຄວນເອົາໃຈໃສ່: ພາຍຫຼັງທີ່ມີການປຸງແຕ່ງ/ປະສົມຊາ ປະລິມານລວມທັງໝົດຂອງຊາທີ່ຈະສົ່ງອອກ ອາດຈະຫຼຸດລົງໜ້ອຍໜຶ່ງ ເນື່ອງຈາກຂີ້ຝຸ່ນໃນຊາ ຫາຍໄປໃນຊ່ວງການປຸງແຕ່ງ. ສະນັ້ນ, ປະລິມານຊາທີ່ຂາຍ ແລະ ກຳນົດໄວ້ໃນໃບສະເໜີລາຄາ ພ້ອມທັງ ເອກະສານສົ່ງອອກ ຕ້ອງໄດ້ປັບປຸງຄືນ ຫຼັງຈາກສຳເລັດການປຸງແຕ່ງ/ປະສົມ ແລະ ຫຸ້ມຫໍ່ຊາ.

## ຂັ້ນຕອນ 5: ການຫຸ້ມຫໍ່ຊາ

ເມື່ອຊາສຳເລັດການປຸງແຕ່ງ/ປະສົມ ແລະ ເອົາສະຫຼາກມາໃສ່ແລ້ວ, ກໍ່ສາມາດຫຸ້ມຫໍ່ຊາໄດ້. ສະຫະກອນ ຕ້ອງຄັດເລືອກເອົາກ່ອງບັນຈຸທີ່ມີຂະໜາດເໝາະສົມ ແລະ ນຳໃຊ້ແຜ່ນຢາງໃສສຳລັບຫຸ້ມຫໍ່ອາຫານ (food-grade plastic liners) ເພື່ອມາຫໍ່ຊາ ແລະ ປ້ອງກັນຊາພາຍໃນກ່ອງ. ກ່ອງເຈັ້ຍ ທີ່ມີຂະໜາດເໝາະສົມ ເຮັດໃຫ້ສາມາດບັນຈຸໄດ້ເຕັມທີ່ ແລະ ຄິດໄລ່ການບັນຈຸໄດ້ ຕາມການຄິດໄລ່ປະລິມານບັນຈຸ ທີ່ກຳນົດໄວ້ໃນເວບໄຊ.

ແຜ່ນຢາງໃສສຳລັບຫຸ້ມຫໍ່ (plastic liners) ຄວນມີຂະໜາດໃຫຍ່ເໝາະສົມ ເພື່ອປ້ອງກັນຊາພາຍໃນກ່ອງໄດ້ຢ່າງດີ. ຄວນນຳໃຊ້ແຜ່ນຢາງໃສຫຸ້ມຫໍ່ ທີ່ໄດ້ຮັບການຢັ້ງຢືນໃຫ້ນຳໃຊ້ກັບຕະຫຼາດອີຢູ. ຄວນສັ່ງຊື້ ກ່ອງເຈັ້ຍ ແລະ ແຜ່ນຢາງໃສຫຸ້ມຫໍ່ ມາໄວ້ກ່ອນລ່ວງໜ້າ ຂັ້ນຕອນການຫຸ້ມຫໍ່ ເພື່ອບໍ່ໃຫ້ເກີດຄວາມຫຼ້າຊ້າ. ສຳລັບ ຊາອິນຊີນັ້ນ ຜູ້ຊື້ ອາດຈະຮຽກຮ້ອງເອົາເອກະສານການຢັ້ງຢືນວັດສະດຸຫຸ້ມຫໍ່ ຈາກຜູ້ສະໜອງວັດສະດຸດັ່ງກ່າວ.

ການຈຳກັດນ້ຳໜັກສູງສຸດຂອງກ່ອງ: ສຳລັບ ຢູ່ ປະເທດ ຝຣັ່ງ ກ່ອງເຈັ້ຍໜຶ່ງ ບັນຈຸເຕັມທີ່ບໍ່ໃຫ້ນ້ຳໜັກເກີນ 25 kg (ອີງຕາມລະບຽບການທີ່ນຳໃຊ້ໃນປັດຈຸບັນ). ສຳລັບ ການຈຳກັດນ້ຳໜັກນີ້ ມີຄວາມແຕກຕ່າງກັນ ລະຫວ່າງ ບໍລິສັດ ແລະ ບັນດາປະເທດ ໃນ ອີຢູ ໂດຍຈຳເປັນຕ້ອງກວດສອບນຳເຈົ້າຂອງຊຸດສິນຄ້າ ຫຼື ບໍລິສັດຂົນສົ່ງ.

**ສິ່ງທີ່ຄວນເອົາໃຈໃສ່:** ກ່ອງເຈັ້ຍ ຕ້ອງບັນຈຸຊາໃຫ້ເຕັມ, ປິດກ່ອງໃຫ້ແຈບດີ ແລະ ໃຫ້ກວດກາລະອຽດ ເພື່ອບໍ່ໃຫ້ມີການບັນຈຸຊາໃສ່ກ່ອງຫຼາຍເກີນໄປ ແລະ ບໍ່ໃຫ້ມີບ່ອນເປົ່າຫວ່າງພາຍໃນກ່ອງຊາ, ຮັບປະກັນບໍ່ໃຫ້ຝາກ່ອງເປີດອອກໃນຊ່ວງການຂົນສົ່ງ. ຖ້າບໍ່ດັ່ງນັ້ນ ອາດຈະເກີດຄວາມເສຍຫາຍກັບຊາພາຍໃນກ່ອງ. ຕ້ອງຮັບປະກັນວ່າ ກ່ອງເຈັ້ຍນັ້ນໄດ້ຄຸນນະພາບ ແລະ ໝັ້ນຄົງ. ແນະນຳໃຫ້ສົ່ງກ່ອງເປົ່າຈຳນວນໜຶ່ງມາກັບຂົນສົ່ງເພື່ອໃນກໍລະນີກ່ອງທີ່ບັນຈຸຊາເກີດມີຄວາມເສຍຫາຍໃນລະຫວ່າງການຂົນສົ່ງມາທີ່ນະຄອນຫຼວງວຽງຈັນ.



### ຂະໜາດຫຸ້ມຫໍ່ຊາຂຽວຂອງສະຫະກອນຜູ້ຜະລິດຊາເມືອງເມິງ

ໃນປີ 2023 ສະຫະກອນຜູ້ຜະລິດຊາເມືອງເມິງ ໄດ້ສົ່ງອອກຊາຂຽວ ແລະ ຫຸ້ມຫໍ່ດ້ວຍແຜ່ນຢາງໃສປະລາດສະຕິກທີ່ນຳໃຊ້ຫຸ້ມຫໍ່ອາຫານ ຂະໜາດ 150*180 ຊມ ແລະ ກ່ອງເຈັ້ຍຂະໜາດ 57*35*44 ແລະ ບັນຈຸໄດ້ເຕັມທີ່ ປະມານ 25 ກລ.

## ຂັ້ນຕອນ 6: ການພິຈາລະນາເອກະສານຂຶ້ນທະບຽນທຸລະກິດຂອງຜູ້ຂາຍ

ຜູ້ຂາຍ (ຕົວຢ່າງ: ອົງການຈັດຕັ້ງຂອງຊາວກະສິກອນທີ່ສົ່ງອອກ) ຢ່າງໜ້ອຍ ຄວນມີເອກະສານທີ່ຈຳເປັນ 3 ຢ່າງ ດັ່ງຕໍ່ໄປນີ້ ຈຶ່ງໄດ້ຮັບອະນຸຍາດໃຫ້ສົ່ງອອກໄດ້:

- ໃບທະບຽນທຸລະກິດ;
- ໃບເສຍອາກອນ;
- ໃບອະນຸຍາດສົ່ງອອກ.

  ບັນດາເອກະສານດັ່ງກ່າວ ເປັນເອກະສານຈຳເປັນ ທີ່ໃຊ້ສຳລັບການດຳເນີນຂະບວນການສົ່ງອອກຕາມລະບຽບການພາສີ ຢູ່ ຝ່າຍລາວ. ເອກະສານເລົ່ານີ້ ເປັນສິ່ງຈຳເປັນຕ້ອງມີ ກ່ອນດຳເນີນການຂະບວນການສົ່ງອອກຕົວຈິງ.

## ຂັ້ນຕອນ 7: ການກະກຽມເອກະສານສຳຄັນໃນການສົ່ງອອກຂອງຜູ້ຂາຍ

ເມື່ອສຳເລັດການປຸງແຕ່ງ/ປະສົມ ແລະ ຫຸ້ມຫໍ່ຊາແລ້ວ, ຜູ້ຂາຍ ຕ້ອງກະກຽມເອກະສານສົ່ງອອກສຳຄັນ 2 ຢ່າງ ຄື: ໃບຮຽກເກັບເງິນ (Invoice) ແລະ ໃບລາຍການສິນຄ້າ (Packing List). ເອກະສານສອງຢ່າງນີ້ ເປັນຫົວໃຈຂອງຂະບວນການສົ່ງອອກ ແລະ ຕ້ອງກະກຽມໃຫ້ດີ.

ໃບຮຽກເກັບເງິນ ຄວນມີລາຍລະອຽດ ຢ່າງໜ້ອຍ ຄື: (1) ລາຍການສິນຄ້າ, (2) ປະລິມານ, (3) ລາຄາ/ກິໂລ, (4) ລາຄາລວມທັງໝົດ ພ້ອມທັງ (5) ເລກລະຫັດຂອງໃບຮຽກເກັບເງິນ ແລະ (6) ເລກລະຫັດຊຸດສິນຄ້າ, (7) ຂໍ້ມູນຕິດຕໍ່ຂອງຜູ້ຊື້ ແລະ ຜູ້ຂາຍ, (8) ໃບ EORI ແລະ ເລກລະຫັດ ຖ້າມີ, (9) ເງື່ອນໄຂການຂາຍ, (10) ເງື່ອນໄຂການຈ່າຍເງິນ ແລະ (11) ຂໍ້ມູນບັນຊີຂອງຜູ້ຂາຍ ກໍ່ຕ້ອງໄດ້ລະບຸ. ໃນບາງກໍລະນີ ຜູ້ຊື້ອາດຈະຕ້ອງການຂໍ້ມູນອື່ນຕື່ມອີກ (ເຊັ່ນ: ຜູ້ຊື້ຕາມມາດຕະຖານການຄ້າເປັນທຳ ອາດຈະຕ້ອງໃຫ້ແຍກຈຳນວນເງິນທີ່ໄດ້ພິເສດຂອງການຄ້າເປັນທຳອອກຈາກລາຄາລວມ). ໃບຮຽກເກັບເງິນ ຕ້ອງມີລາຍເຊັນຜູ້ຂາຍ ແລະ ໃນບາງກໍລະນີ ໃບສະເໜີລາຄາ ຕ້ອງມີລາຍເຊັນຂອງຜູ້ຊື້.

ໃບລາຍການສິນຄ້າ ມີຂໍ້ມູນລະອຽດຂອງສິນຄ້າທີ່ຈັດສົ່ງ ຄື: ຈຳນວນກ່ອງສິນຄ້າ ແລະ ນ້ຳໜັກ. ໂດຍພື້ນຖານແລ້ວ ໃບລາຍການສິນຄ້າ ມີຂໍ້ມູນທັງໝົດຂອງສິນຄ້າ.

ໃບລາຍການສິນຄ້າ ຄວນມີຂໍ້ມູນດັ່ງຕໍ່ໄປນີ້ຕື່ມອີກ:

ໃນກໍລະນີ ເປັນສິນຄ້າຊາທີ່ໄດ້ຮັບການຢັ້ງຢືນ ຊື່ສິນຄ້າ/ລາຍການການສິນຄ້າ ໃນໃບລາຍການສິນຄ້າ ຕ້ອງຖືກຕ້ອງກັບຊື່ສິນຄ້າ/ລາຍການສິນຄ້າທີ່ຂຽນໄວ້ໃນໃບຢັ້ງຢືນ.

ໃບລາຍການສິນຄ້າ ຕ້ອງມີລາຍເຊັນຂອງຜູ້ຂາຍ (ຜູ້ສົ່ງອອກ) ແລະ ນຳໃຊ້ໃນຂະບວນການສົ່ງອອກທັງໝົດ. ສະນັ້ນ, ຂໍ້ມູນໃນໃບລາຍການສິນຄ້າ ຕ້ອງຖືກຕ້ອງ. ຜູ້ຊື້ ຄວນກວດສອບໃບສະເໜີລາຄາ ແລະ ໃບລາຍການສິນຄ້າ ໃຫ້ລະອຽດ ແລະ ຫຼາຍຄັ້ງ.

## ຂັ້ນຕອນ 8: ການກະກຽມເອກະສານສົ່ງອອກນຳ ອົງກອນທີ່ກ່ຽວຂ້ອງຂອງລັດ

ເມື່ອສຳເລັດການກະກຽມໃບສະເໜີລາຄາ ແລະ ໃບລາຍການສິນຄ້າແລ້ວ, ຜູ້ຂາຍ ສາມາດສືບຕໍ່ຂັ້ນຕອນຕໍ່ໄປ ຄື: ກະກຽມ ແລະ ນຳໃຊ້ ເອກະສານສົ່ງອອກນຳອົງກອນທີ່ກ່ຽວຂ້ອງຂອງລັດ. ເອກະສານສົ່ງອອກສຳຄັນ 2 ຢ່າງ ຄື: ໃບຢັ້ງຢືນແຫຼ່ງກຳເນີດ (Certificate of Origin) ແລະ ໃບຢັ້ງຢືນສຸຂານາໄມພືດ (Phytosanitary Certificate). ເອກະສານສອງສະບັບນີ້ ອອກເປັນພາສາອັງກິດ ແລະ ຜູ້ຂາຍ ຈຳເປັນຕ້ອງມີເອກະສານດັ່ງກ່າວເພື່ອນຳໄປແຈ້ງນຳພາກສ່ວນທີ່ກ່ຽວຂ້ອງ. ບໍລິສັດຂົນສົ່ງຈຳນວນໜຶ່ງ ຍັງໃຫ້ບໍລິການຈັດການເອກະສານດັ່ງກ່າວພ້ອມ.

### > ໃບຢັ້ງຢືນແຫຼ່ງກຳເນີດ

ຢູ່ ສປປ ລາວ, ສະພາອຸດສາຫະກຳ ແລະ ການຄ້າແຂວງ ຮັບຜິດຊອບອອກ ແລະ ລົງລາຍເຊັນ ໃບຢັ້ງຢືນແຫຼ່ງກຳເນີດ. ສຳລັບການສົ່ງອອກສິນຄ້າຊາ ຂອງ ສະຫະກອນຜູ້ຜະລິດຊາເມືອງເມິງ ແມ່ນ ສະພາອຸດສາຫະກຳ ແລະ ການຄ້າແຂວງ ບໍ່ແກ້ວ ເປັນຜູ້ອອກ ແລະ ລົງລາຍເຊັນໃບຢັ້ງຢືນແຫຼ່ງກຳເນີດ ໂດຍພາຍໃຕ້ຄຸ້ມຄອງຂອງກະຊວງອຸດສາຫະກຳ ແລະ ການຄ້າ. ໃບຢັ້ງຢືນແຫຼ່ງກຳເນີດ ມີຂໍ້ມູນສຳຄັນ ຄື: ປະເພດສິນຄ້າ, ເຄື່ອງໝາຍການຄ້າ, ປະລິມານ, ລາຍລະອຽດຂອງສິນຄ້າ ແລະ ນ້ຳໜັກ. ນອກຈາກນັ້ນ, ຍັງມີຂໍ້ມູນ ກ່ຽວກັບ ວິທີການຂົນສົ່ງ ແລະ ດ່ານຂາເຂົ້າ ພ້ອມທັງ ມີຂໍ້ມູນຕິດຕໍ່ ຂອງ ຜູ້ຂາຍ ແລະ ຜູ້ຊື້.

| ລ/ດ | ລາຍການ | ຈຳນວນ | ລະຫັດ HS | ເລກລະຫັດ ຊຸດສິນຄ້າ | ຈຳນວນ ກ່ອງ | ນ້ຳໜັກສຸດທິ (ກລ) | ນ້ຳໜັກ ລວມ(ກລ) | ນ້ຳໜັກລວມ ສຸດທິ (ກລ) | ນໍ້ໜັກລວມ ທັງໝົດ (ກລ) |
|---|---|---|---|---|---|---|---|---|---|
| 1 | ຊາດຳອິນຊີແບບແຫ້ງ | | | | | | | | |
| | ປະລິມານລວມ/ຈຳນວນລວມ | | | | | | | | |

### > ໃບຢັ້ງຢືນສຸຂານາໄມພືດ

ກະຊວງກະສິກຳ ແລະ ປ່າໄມ້ (ກົມປູກຝັງ) ຮັບຜິດຊອບອອກໃບຢັ້ງຢືນສຸຂານາໄມພືດ. ສຳລັບ ການສົ່ງອອກສິນຄ້າຊາ ຂອງ ສະຫະກອນຜູ້ຜະລິດຊາເມືອງເມິງ ແມ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ ບໍ່ແກ້ວ ອອກໃບຢັ້ງຢືນສຸຂານາໄມພືດ.

ໃບຢັ້ງຢືນສຸຂານາໄມພືດ ປະກອບມີຂໍ້ມູນລະອຽດ ຄື: ຊື່ ແລະ ທີ່ຢູ່ຂອງຜູ້ຂາຍ ແລະ ຜູ້ຊື້, ລາຍລະອຽດຂອງສິນຄ້າ ແລະ ການຫຸ້ມຫໍ່, ປະລິມານ, ຊື່ພືດ ແລະ ຢັ້ງຢືນວ່າ ສິນຄ້າດັ່ງກ່າວ ໄດ້ຜ່ານການກວດກາ ແລະ ປອດສັດຕູພືດ.

### > ໃບເຄື່ອນຍ້າຍສິນຄ້າ (M8)

ໃບເຄື່ອນຍ້າຍສິນຄ້າ ອະນຸຍາດໃຫ້ສິນຄ້າສາມາດຂົນສົ່ງຈາກສະຖານທີ່ຜະລິດ ໄປ ດ່ານຂາອອກ. ໃນເວລາສ້າງສັນຍາກັບບໍລິສັດສົ່ງອອກ ເພື່ອຂົນສົ່ງສິນຄ້າ, ຜູ້ຂາຍ ສາມາດສະເໜີໃຫ້ບໍລິສັດ ເປັນຜູ້ຮັບຜິດຊອບປະສານນຳພາກສ່ວນທີ່ກ່ຽວຂ້ອງ ເພື່ອອອກໃບເຄື່ອນຍ້າຍສິນຄ້າໃຫ້. ສຳລັບ ການສົ່ງອອກສິນຄ້າຊາ ຂອງ ສະຫະກອນຜູ້ຜະລິດຊາເມືອງເມິງ ແມ່ນ ບໍລິສັດສົ່ງອອກ ຮັບຜິດຊອບຈັດການໃບເຄື່ອນຍ້າຍສິນຄ້ານຳພາກສ່ວນທີ່ກ່ຽວຂ້ອງໃຫ້ພ້ອມ.

### > ການຈັດການເອກະສານສົ່ງອອກ ແລະ ການຈ່າຍອາກອນ ຢູ່ ຂັ້ນເມືອງ.

ຜູ້ຂາຍ ຄວນໃຫ້ສຳເລັດການດຳເນີນເອກະສານທັງໝົດນຳພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນເມືອງ ເຊັ່ນ: ການຈ່າຍອາກອນ. ຜູ້ຂາຍ ຄວນສອບຖາມລາຍລະອຽດຂອງເອກະສານທີ່ຈຳເປັນນຳພາກສ່ວນທີ່ກ່ຽວຂ້ອງ ແລະ ຈ່າຍອາກອນ ຢູ່ ຂັ້ນທ້ອງຖິ່ນ.

## ຂັ້ນຕອນ 9: ການກະກຽມໃບຢັ້ງຢືນການກວດກາສິນຄ້າ ເພື່ອການກວດສອບ ຕາມລະບົບ TRACES (ນຳໃຊ້ສະເພາະກັບສິນຄ້າອິນຊີເທົ່ານັ້ນ)

ໃບຢັ້ງຢືນການກວດກາສິນຄ້າ (COI) ເປັນໃບຢັ້ງຢືນນຳໃຊ້ໃຫ້ເຈົ້າໜ້າທີ່ພາສີ ສຳລັບ ບໍລິສັດ ສົ່ງອອກສິນຄ້າ ໄປ ອີຢູ. ໃບຢັ້ງຢືນດັ່ງກ່າວ ຮັບປະກັນວ່າ ສິນຄ້າທັງໝົດທີ່ນຳເຂົ້ານັ້ນ ສອດຄ່ອງກັບລະບຽບ ແລະ ກົດໝາຍກ່ຽວກັບ ຄວາມປອດໄພ ແລະ ອາຫານ ຂອງ ອີຢູ ແລະ ຢັ້ງຢືນຄວາມເປັນອິນຊີຂອງສິນຄ້າ.

ຜູ້ຂາຍ ຕ້ອງມີໃບຢັ້ງຢືນການກວດກາສິນຄ້າ (COI) ໃຫ້ແຕ່ລະຊຸດສິນຄ້າອິນຊີ. ໃບຢັ້ງຢືນນີ້ ສາມາດຂໍທາງອອນໄລນຳພາກສ່ວນທີ່ກ່ຽວຂ້ອງໂດຍຜ່ານລະບົບ TRACES ຫຼື ເອີ້ນກັນວ່າ Trade Control and Expert System (https://webgate.ec.europa.eu/tracesnt).

ໃນກໍລະນີເປັນສິນຄ້າຊາອິນຊີ, ໃບຢັ້ງຢືນດັ່ງກ່າວ ມີຄວາມຈຳເປັນ ເພື່ອນຳໃຊ້ສະສາງການສົ່ງອອກ ແລະ ໃບຢັ້ງຢືນການກວກາສະບັບສຸດທ້າຍນັ້ນຕ້ອງມີລາຍເຊັນຂອງໜ່ວຍງານຢັ້ງຢືນ. ນອກຈາກໃບຢັ້ງຢືນການກວດກາສິນຄ້າແລ້ວ ຍັງມີຮ່າງໃບຂົນສົ່ງສິນຄ້າ (BLs) ທີ່ອອກໃຫ້ເພື່ອການກວດກາສິນຄ້າ ກ່ອນທີ່ສິນຄ້າເຄື່ອນຍ້າຍອອກຈາກດ່ານຂາອອກ. ໃບຂົນສົ່ງສິນຄ້າສະບັບສຸດທ້າຍ ແມ່ນອອກໃຫ້ ພາຍຫຼັງສິນຄ້າເຄື່ອນຍ້າຍອອກຈາກດ່ານຂາອອກແລ້ວ.

**ສິ່ງທີ່ຄວນເອົາໃຈໃສ່**

ຂໍ້ມູນທັງໝົດ ຕ້ອງຖືກກັນໃນທຸກເອກະສານ. ຖ້າມີຂໍ້ມູນໃດໜຶ່ງບໍ່ຖືກກັນ ເຊັ່ນ: ການຂຽນຄຳສັບ ແລະ ຕົວໜັງສື ບໍ່ຖືກ ກໍ່ອາດສົ່ງຜົນເກີດໃຫ້ມີບັນຫາຕາມມາໄດ້. ດັ່ງນັ້ນ, ຕ້ອງປະສານຢ່າງໃກ້ຊິດ ແລະ ກວດກາເອກະສານລະອຽດ ນຳຜູ້ຊື້, ພາກສ່ວນທີ່ອອກເອກະສານ ແລະ ບໍລິສັດຂົນສົ່ງ.

ສຳລັບ ການສົ່ງອອກສິນຄ້າຊາອິນຊີ ຂອງ ສະຫະກອນຜູ້ຜະລິດຊາເມືອງເມິງ ແມ່ນ ບໍລິສັດ ໄດ້ສະເໜີໃຫ້ສະຫະກອນ ລົງລະບຽນໃນລະບົບ TRACES ແລະ ປະຕິບັດຕາມຂະບວນການຂັ້ນຕອນຈົນໄດ້ຮັບໃບຢັ້ງຢືນການກວດກາສິນຄ້າສະບັບສຸດທ້າຍ. ສະຫະກອນ ໄດ້ກະກຽມຂໍ້ມູນ, ເອກະສານ ແລະ ຂໍໃບຢັ້ງຢືນການກວດກາສິນຄ້າ ຕາມລະບົບ TRACES ດ້ວຍຕົນເອງ ໂດຍເຫັນວ່າ ໃຊ້ເວລາດົນຫຼາຍ.

**ສິ່ງທີ່ຄວນເອົາໃຈໃສ່:** ໃບຢັ້ງຢືນການກວດກາສິນຄ້າ ຕ້ອງອອກໃຫ້ກ່ອນການເຄື່ອນຍ້າຍສິນຄ້າອອກຈາກ ສປປ ລາວ. ອີກຢ່າງໜຶ່ງ ແມ່ນໃບຢັ້ງຢືນການກວດກາສິນຄ້າ ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ເມື່ອສິນຄ້າເຄື່ອນຍ້າຍຜ່ານຊາຍແດນຂອງ ສປປ ລາວ. ຖ້າບໍ່ດັ່ງນັ້ນ ສິນຄ້າ ອາດຈະສູນເສຍຄວາມເປັນອິນຊີຂອງມັນ ແລະ ອາດຈະບໍ່ມີຄຸນຄ່າຫຍັງຕໍ່ຜູ້ຊື້. ດັ່ງນັ້ນ, ຄວນເລີ່ມຂະບວນການຂໍໃບຢັ້ງຢືນການກວດກາສິນຄ້າ ລ່ວງໜ້າປະມານ 5 ວັນ ກ່ອນການເຄື່ອນຍ້າຍຊຸດສິນຄ້າອອກຈາກ ສປປ ລາວ.

ເມື່ອໄດ້ຮັບໃບຢັ້ງຢືນແຫຼ່ງກຳເນີດ, ໃບຢັ້ງຢືນສຸຂານາໄມພືດ ແລະ ເອກະສານສຳຄັນທີ່ກ່ຽວຂ້ອງແລ້ວ, ສາມາດເຄື່ອນຍ້າຍຊຸດສິນຄ້າຊາໄປຫາດ່ານຂາອອກ, ຂ່ຽນຖ່າຍໃສ່ພາຫະນະຂົນສົ່ງສິນຄ້າ ແລະ ເຄື່ອນຍ້າຍ

ອອກຈາກ ສປປ ລາວ (ເຊັ່ນ: ທ່າບົກທ່ານາແລ້ງ).

ຖ້າສົ່ງອອກພາຍໃຕ້ເງື່ອນໄຂການສົ່ງອອກແບບ FOB, ຜູ້ສົ່ງອອກ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໃນການສົ່ງອອກ ຈົນເຖິງຈຸດທີ່ຕົກລົງກັນ ໃນເງື່ອນໄຂການສົ່ງອອກດັ່ງກ່າວ. ຫຼັງຈາກຈຸດນັ້ນໄປ ແມ່ນບໍລິສັດຂົນສົ່ງ ຂອງຜູ້ຊື້ ຮັບຜິດຊອບທັງໝົດ ລວມທັງ ຄ່າໃຊ້ຈ່າຍ ຕໍ່ກັບສິນຄ້າດັ່ງກ່າວ.

ສຳລັບ ການສົ່ງອອກສິນຄ້າຊາອິນຊີ ຂອງ ສະຫະກອນຜູ້ຜະລິດຊາເມືອງ ເມິງ ແມ່ນ ສະຫະກອນ ວ່າຈ້າງບໍລິສັດ ໃຫ້ຂົນສົ່ງຊາຈາກແຂວງ ບໍ່ແກ້ວ ໄປເຖິງ ທ່ານາແລ້ງ ພ້ອມທັງ ຈັດການເອກະສານພາສີທັງໝົດ ແລະ ຂົນ ຖ່າຍສິນຄ້າໃສ່ຕູ້ຄອນເທັນເນີ້ໃນຂັ້ນຕອນສຸດທ້າຍ.

ຂັ້ນຕອນຕ່າງໆ ໃນການສົ່ງສິນຄ້າຊາອິນຊີເຖິງການຂົນຖ່າຍໃສ່ຕູ້ຄອນ ເທັນເນີ້ ສະຫຼຸບດັ່ງລຸ່ມນີ້.

## ຂັ້ນຕອນ 10 ການຂົນສົ່ງສິນຄ້າຊາອິນຊີເຖິງດ່ານ ຂາອອກ ແລະ ການຂົນຖ່າຍ

ເມື່ອໄດ້ຮັບໃບຢັ້ງຢືນແຫຼ່ງກຳເນີດ, ໃບຢັ້ງຢືນສຸຂານາໄມພືດ ແລະ ເອກະສານສຳຄັນທີ່ກ່ຽວຂ້ອງແລ້ວ, ສາມາດເຄື່ອນຍ້າຍສິນຄ້າຊາອິນຊີ ໄປຫາດ່ານຂາອອກ, ຂົນຖ່າຍໃສ່ພາຫະນະຂົນສົ່ງ ແລະ ເຄື່ອນຍ້າຍ ອອກຈາກ ສປປ ລາວ (ເຊັ່ນ: ທ່າບົກທ່ານາແລ້ງ).

ຖ້າສົ່ງອອກພາຍໃຕ້ເງື່ອນໄຂການສົ່ງອອກແບບ FOB, ຜູ້ສົ່ງອອກ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໃນການສົ່ງອອກ ຈົນເຖິງຈຸດທີ່ໄດ້ເຫັນດີ ຕົກລົງຮ່ວມກັນໃນເງື່ອນໄຂການສົ່ງອອກດັ່ງກ່າວ. ຫຼັງຈາກຈຸດນັ້ນໄປ ແມ່ນບໍລິສັດຂົນສົ່ງ (ຜູ້ຊື້) ຮັບຜິດຊອບທັງໝົດ ລວມທັງ ຄ່າໃຊ້ຈ່າຍ ຕໍ່ກັບສິນຄ້າດັ່ງກ່າວ.

ສຳລັບ ການສົ່ງອອກສິນຄ້າຊາອິນຊີ ຂອງ ສະຫະກອນຜູ້ຜະລິດຊາເມືອງ ເມິງ ແມ່ນ ສະຫະກອນ ໄດ້ວ່າຈ້າງບໍລິສັດ ໃຫ້ຂົນສົ່ງຊາຈາກ ແຂວງ ບໍ່ແກ້ວ ເຖິງ ທ່ານາແລ້ງ, ຈັດການເອກະສານພາສີ ແລະ ຂົນຖ່າຍສິນຄ້າ ຊາໃສ່ຕູ້ຄອນເທັນເນີ້ສຸດທ້າຍ. ເຈົ້າຂອງຊຸດສິນຄ້າຊານັ້ນ ຮັບຜິດຊອບ ການຂົນຖ່າຍສິນຄ້າ.

ຂັ້ນຕອນຕ່າງໆ ໃນການຈັດສົ່ງສິນຄ້າຊາຈົນເຖິງການຂົນຖ່າຍ ມີດັ່ງລຸ່ມນີ້.

### > ຂົນສົ່ງຈາກຈຸດຜະລິດ ໄປເຖິງ ທ່າບົກ

ໂດຍທົ່ວໄປ ການຂົນສົ່ງພາຍໃນ ສປປ ລາວ ມີລາຄາຖືກ. ເມື່ອສິນຄ້າ ມີປະລິມານໜ້ອຍ ສາມາດນຳໃຊ້ການບໍລິການຂົນສົ່ງຂອງບໍລິສັດຂົນສົ່ງ ເຊັ່ນ: ຮຸ່ງອາລຸນ, ມີໄຊ ຫຼື DHL. ໃນກໍລະນີມີສິນຄ້າຫຼາຍ ແມ່ນສາມາດ ເຊົ່າລົດຂົນສົ່ງນຳບໍລິສັດຂົນສົ່ງ.

### > ຄ່າຝາກສາງ

ບໍລິສັດຂົນສົ່ງ ໄດ້ຮັບສິນຄ້າ, ຈັດການເອກະສານທາງພາສີ ແລະ ຂົນ ຖ່າຍສິນຄ້າ ຢູ່ ທ່າບົກ. ໃນກໍລະນີ ມີຄວາມຫຼ້າຊ້າເກີດຂຶ້ນ ລະຫວ່າງ ການຂົນຖ່າຍສິນຄ້າສຸດທ້າຍ ແລະ ການສົ່ງອອກ ແມ່ນ ບໍລິສັດຂົນສົ່ງ ອາດຈະຕ້ອງເກັບຮັກສາຊຸດສິນຄ້ານັ້ນໄວ້ໃນສາງ. ການເກັບຮັກສາສິນຄ້າ ໄວ້ໃນສາງ ມີຄ່າໃຊ້ຈ່າຍສູງໃນແຕ່ລະມື້. ສະນັ້ນ, ຈຳເປັນຕ້ອງວາງແຜນໃຫ້ ດີ ເພື່ອຈຳກັດຈຳນວນວັນໃນການເກັບຮັກສາ ແລະ ຫຼີກລ່ຽງຕົ້ນທຶນສູງ.

### > ການຂົນຖ່າຍສິນຄ້າ ແລະ ການຈັດການ ເອກະສານພາສີ

ສຳລັບ ການສົ່ງອອກສິນຄ້າຊາອິນຊີ ຂອງ ສະຫະກອນຜູ້ຜະລິດຊາເມືອງ ເມິງ ແມ່ນ ສະຫະກອນ ໄດ້ວ່າຈ້າງບໍລິສັດຂົນສົ່ງ ຈັດການເອກະສານ ພາສີ ແລະ ຂົນຖ່າຍສິນຄ້າພ້ອມ (ຂົນຖ່າຍສິນຄ້າໃສ່ຕູ້ຄອນເທັນເນີ້ ສຸດທ້າຍ). ເມື່ອວຽກງານດັ່ງກ່າວສຳເລັດ ແມ່ນ ໄດ້ໂອນສິນຄ້າໃຫ້ບໍລິສັດ ຂົນສົ່ງ ໂດຍເປັນບໍລິສັດ ທີ່ຜູ້ຊື້ ວ່າຈ້າງເອງ, ເປັນບໍລິສັດທີ່ເຊື່ອຖືໄດ້ ໃນ ການຂົນສົ່ງ ແລະ ປະກັນໄພ ເລີ່ມຈາກການຂົນຖ່າຍສິນຄ້າ ຈົນສິນຄ້າ ເຖິງດ່ານຂາເຂົ້າ ຂອງ ອີຢູ. ແຕ່ວ່າ ຖ້າພາຍໃຕ້ເງື່ອນໄຂການສົ່ງອອກ ແບບ FOB ນັ້ນ ການຂົນຖ່າຍສິນຄ້າ ແລະ ການຈັດການເອກະສານ ພາສີ ສາມາດເປັນຄວາມຮັບຜິດຊອບ ຂອງ ຜູ້ຊື້ ຫຼື ຜູ້ຂາຍ ກໍ່ໄດ້ ບົນ ພື້ນຖານການເຈລະຈາເຫັນດີຕົກລົງຮ່ວມກັນ.

### > ການມອບ-ຮັບ ສິນຄ້າ

ພາຍໃຕ້ເງື່ອນໄຂການສົ່ງອອກແບບ FOB, ເມື່ອສຳເລັດຂັ້ນຕອນທັງໝົດ ແລະ ຂົນຖ່າຍສິນຄ້າ ແລ້ວ, ຄ່າໃຊ້ຈ່າຍ ແລະ ການມອບ-ຮັບ ຊຸດສິນຄ້າ ເປັນຄວາມຮັບຜິດຊອບຂອງຜູ້ຊື້. ບໍລິສັດຂົນສົ່ງ ອອກໃບຂົນສົ່ງສິນຄ້າ ສຸດທ້າຍ ແລະ ສິນຄ້າເຄື່ອນຍ້າຍອອກຈາກຊາຍແດນ.

## ຂັ້ນຕອນ 11: ການສົ່ງຊຸດເອກະສານຂອງແທ້ ໃຫ້ຜູ້ຊື້ (ຖ້າຜູ້ຊື້ຕ້ອງການ)

ຜູ້ຊື້ ອາດຈະຕ້ອງການຊຸດເອກະສານສົ່ງອອກຂອງແທ້ ເພື່ອໄປຢັ້ງຢືນເອົາ ສິນຄ້າ ຢູ່ ດ່ານຂາເຂົ້າ. ເອກະສານດັ່ງກ່າວ ສາມາດສົ່ງນຳບໍລິສັດຂົນສົ່ງໄດ້ ໂດຍມີຄ່າບໍລິການ ເລີ່ມແຕ່ 90 ໂດລາສະລັດ ຫາ 150 ໂດລາສະຫະລັດ (ສົ່ງຈາກ ສປປ ລາວ ເຖິງ ປະເທດ ຝຣັ່ງ).

ຄວນຈະເຈລະຈາໃຫ້ຮູ້ລະອຽດວ່າ ຜູ້ຊື້ ຕ້ອງການຊຸດເອກະສານສົ່ງອອກ ຂອງແທ້ ຫຼື ບໍ່ ແລະ ແມ່ນໃຜເປັນຜູ້ຮັບຜິດຊອບການຈັດສົ່ງ ແລະ ຄ່າໃຊ້ຈ່າຍໃນການສົ່ງ. ບາງບໍລິສັດຂົນສົ່ງ ກໍ່ມີບໍລິການຈັດສົ່ງຊຸດ ເອກະສານດັ່ງກ່າວນຳ.

ອີງຕາມຄວາມຕ້ອງການຂອງຜູ້ຊື້ ເຫັນວ່າ ອາດຈະໄດ້ສົ່ງຊຸດເອກະສານ ຂອງແທ້ ທີ່ມີລາຍເຊັນ ດັ່ງຕໍ່ໄປນີ້:

- ໃບຮຽກເກັບເງິນ;
- ໃບລາຍການສິນຄ້າ;
- ໃບຢັ້ງຢືນສຸຂານາໄມພືດ;
- ໃບຢັ້ງຢືນແຫຼ່ງກຳເນີດ;
- ບາງຄັ້ງ ກໍ່ມີໃບຢັ້ງຢືນການກວດກາສິນຄ້າ;
- ໃບຂົນສົ່ງສິນຄ້າ.

## ຂັ້ນຕອນ 12: ການຕິດຕາມການຮັບສິນຄ້າ ແລະ ການ ຈ່າຍເງິນ

ເມື່ອສຳເລັດການຂົນສົ່ງ ແລະ ມອບ-ຮັບ ສິນຄ້າ ໃຫ້ຜູ້ຊື້ແລ້ວ (ຕາມ ຂະບວນການເງື່ອນໄຂການສົ່ງອອກ FOB), ຜູ້ຂາຍ ສາມາດຕິດຕາມ ຄວາມຄືບໜ້າການສົ່ງອອກ ແລະ ການຮັບສິນຄ້າ ຂອງຜູ້ຊື້. ຜູ້ຂາຍ ຕິດຕາມການຈ່າຍເງິນ ແລະ ຢັ້ງຢືນການໄດ້ຮັບເງິນດັ່ງກ່າວ ອີງຕາມ ເງື່ອນໄຂການຈ່າຍເງິນ ທີ່ເຫັນດີຕົກລົງຮ່ວມກັນກັບຜູ້ຊື້.

## ສິ່ງທ້າທາຍ ແລະ ວິທີການແກ້ໄຂ ສຳລັບການກະກຽມ ເອກະສານການສົ່ງອອກ ເປັນພາສາອັງກິດ

ສິ່ງທ້າທາຍສຳຄັນອັນໜຶ່ງໃນຂະບວນການສົ່ງອອກ ແມ່ນ ພາສາ ແລະ ຄວາມຫຍຸ້ງຍາກຂອງລະບົບເອກະສານ ທີ່ຕ້ອງໄດ້ກະກຽມ ແລະ ອອກເອກະສານ ໃຫ້ ໂດຍສະເພາະ ແມ່ນ ໃບຢັ້ງຢືນການກວດກາສິນຄ້າ. ໂດຍທົ່ວໄປ ກຸ່ມຊາວ ກະສິກອນ ຫຼື ສະຫະກອນ ຂາດຄວາມຮູ້ດ້ານພາສາອັງກິດ ແລະ ການນຳໃຊ້ຄອມ ພິວເຕີ້. ນອກຈາກນັ້ນ, ອົງການປົກຄອງທ້ອງຖິ່ນ ຍັງບໍ່ທັນມີຄວາມຮູ້ຫຼາຍ ກ່ຽວກັບ ແບບພິມໃບຢັ້ງຢືນແຫຼ່ງກຳເນີດ ແລະ ແບບພິມໃບຢັ້ງຢືນສຸຂານາໄມພືດ.

ວິທີແກ້ໄຂ ແມ່ນ ນຳໃຊ້ຊ່ຽວຊານໃນການຈັດການສົ່ງອອກ ຫຼື ບໍລິສັດສົ່ງອອກ ທີ່ມີປະສົບການ. ແຕ່ວ່າ ໃນໄລຍະຍາວ ຈຳເປັນຕ້ອງໄດ້ໃຫ້ຄວາມຮູ້ ແລະ ສ້າງ ຄວາມເຂັ້ມແຂງ ໃນດ້ານນີ້ ໃຫ້ແກ່ອົງການຈັດຕັ້ງຂອງຊາວກະສິກອນ. ດັ່ງນັ້ນ, ຕ້ອງ ໄດ້ວາງແຜນການສ້າງຄວາມເຂັ້ມແຂງ ແລະ ການຮຽນຮູ້ ກ່ຽວກັບ ການສົ່ງອອກ ໃຫ້ ແກ່ອົງການຈັດຕັ້ງຂອງຊາວກະສິກອນ.requirement for Lao FOs.

**ຄູ່ມືສະບັບນີ້ ຂຽນໂດຍ:**

ທ່ານ Sophie LE JEUNE, ຮອງຫົວໜ້າທີມງານ, ອົງການ GRET ແລະ ທ່ານ Anna-Maria LAMPE, ຊ່ຽວຊານຊາ, ໂຄງການສ້າງຄວາມເຂັ້ມແຂງ ໃນການຜະລິດໃບຊາເປັນສິນຄ້າ.

## 12 ຂັ້ນຕອນ ສໍາລັບການສົ່ງອອກຊາອິນຊີ ໄປ ເອີລົບ (ຕາມເງື່ອນໄຂການສົ່ງອອກແບບ FOB)

ບັນດາຂັ້ນຕອນດັ່ງກ່າວນີ້ ອາດຈະແຕກຕ່າງກັນ ຕາມເງື່ອນໄຂຂອງຜູ້ຊື້ ແລະ ລະບຽບການທີ່ນໍາໃຊ້




Photo credits. page 1: © Modlao, pages 3, 4 & 5: © Gret.